ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

2774

ກະຊວງກະສິກຳ ແລະ ສິ່ງແວດລ້ອມ

ເລກທີ................/ກສ

ນະຄອນຫຼວງວຽງຈັນ, ວັນທີ 29 JUN 2026

# ຂໍ້ຕົກລົງ
# ວ່າດ້ວຍການກຳນົດເນື້ອໃນແບບພິມ ແລະ ການພິມຕາມແບບພິມ ໃບທະບຽນທີ່ດິນ ແລະ ໃບຕາດິນ

- ອີງຕາມ ກົດໝາຍວ່າດ້ວຍທີ່ດິນ ສະບັບເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019;
- ອີງຕາມ ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງກະສິກຳ ແລະ ສິ່ງແວດລ້ອມ ສະບັບເລກທີ 534/ນຍ, ລົງວັນທີ 14 ສິງຫາ 2025;
- ອີງຕາມ ໜັງສືສະເໜີຂອງກົມຄຸ້ມຄອງ ແລະ ພັດທະນາທີ່ດິນ ສະບັບເລກທີ 3034/ກຄພດ, ລົງວັນທີ 27 ພຶດສະພາ 2026;
- ອີງຕາມ ໜັງສືສະເໜີຂອງຫ້ອງການ ສະບັບເລກທີ 3545/ຫກ, ລົງວັນທີ 20 ມິຖຸນາ 2026.

## ລັດຖະມົນຕີ ກະຊວງກະສິກຳ ແລະ ສິ່ງແວດລ້ອມ ອອກຂໍ້ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ກຳນົດ ເນື້ອໃນແບບພິມໃບທະບຽນທີ່ດິນ ແລະ ໃບຕາດິນລັດ, ໃບຕາດິນ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ແລະ ການພິມເນື້ອໃນລະອຽດຕາມແບບພິມໃບທະບຽນທີ່ດິນ ແລະ ໃບຕາດິນດັ່ງກ່າວ ເພື່ອນຳໃຊ້ໃຫ້ ເປັນເອກະພາບກັນໃນຂອບເຂດທົ່ວປະເທດ.

### ມາດຕາ 2 ໃບທະບຽນທີ່ດິນ ແລະ ໃບຕາດິນ

ໃບທະບຽນທີ່ດິນ ແມ່ນ ເອກະສານທີ່ບັນທຶກຂໍ້ມູນຈາກການຂຶ້ນທະບຽນອອກໃບຕາດິນ ຕາມເລກລຳດັບ ໂດຍມີລາຍເຊັນ ແລະ ຕາປະທັບຫົວໜ້າຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ເມືອງ, ນະຄອນ. ສຳລັບການອອກໃບທະບຽນທີ່ດິນລັດໃຫ້ແກ່ຜູ້ເຊົ່າ ຫຼື ສຳປະທານ ຫຼື ຜູ້ຊື້ສິດນຳໃຊ້ທີ່ດິນຈັດສັນຂອງລັດແບບມີກຳນົດ ໂດຍມີລາຍເຊັນ ແລະ ຕາປະທັບ ຫົວໜ້າພະແນກກະສິກຳ ແລະ ສິ່ງແວດລ້ອມ ນະຄອນຫຼວງວຽງຈັນ, ແຂວງ.

ໃບຕາດິນ ແມ່ນ ເອກະສານທີ່ເປັນຫຼັກຖານຕົ້ນຕໍອັນໜຶ່ງອັນດຽວ ກ່ຽວກັບສິດນຳໃຊ້ທີ່ດິນ ຊຶ່ງໄດ້ຄັດສຳເນົາ ຢ່າງຖືກຕ້ອງຈາກໃບທະບຽນທີ່ດິນ ເພື່ອມອບໃຫ້ແກ່ຜູ້ເປັນເຈົ້າຂອງສິດນຳໃຊ້ທີ່ດິນພຽງໃບດຽວນຳໃຊ້ເປັນຫຼັກຖານຢ່າງຍາວນານ ຈົນກວ່າຈະມີການປ່ຽນແປງໃໝ່ ຕາມເງື່ອນໄຂທີ່ກຳນົດໄວ້ໃນກົດໝາຍ. ໃບຕາດິນ ມີສອງແບບ ຄື ໃບຕາດິນລັດ ແລະ ໃບຕາດິນ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງສັງຄົມ.

# ໝວດທີ 2
# ເນື້ອໃນແບບພິມໃບທະບຽນທີ່ດິນ ແລະ ໃບຕາດິນ

**ມາດຕາ 3 ເນື້ອໃນແບບພິມໃບທະບຽນທີ່ດິນ ແລະ ໃບຕາດິນລັດ**

ລັກສະນະພາຍນອກ ຂອງໃບທະບຽນທີ່ດິນລັດ ແລະ ໃບຕາດິນລັດ ປະກອບມີ ຂະໜາດເຈັ້ຍ A4 (210 x 297 ມີລີແມັດ), ດ້ານໜ້າເປັນສີຂາວລາຍຟ້າອ່ອນ, ເຄື່ອງໝາຍຊາດ, ແຜນທີ່ປະເທດລາວຢູ່ທາງກາງເປັນສີສົ້ມອ່ອນ, ສັນຍາລັກລູກສອນຊີ້ບອກໄປທາງທິດເໜືອຂອງແຜນທີ່ປະເທດ, ຂອບເປັນສີແດງທີ່ມີລາຍຂອບເປັນສີ ເຫຼືອງ ແລະ ດ້ານຫຼັງ ແມ່ນບໍ່ໄດ້ພິມຫຍັງໃສ່.

ລັກສະນະພາຍໃນ ຂອງໃບທະບຽນທີ່ດິນລັດ ແລະ ໃບຕາດິນລັດ ປະກອບມີ ຮູບທາດຫຼວງວຽງຈັນຢູ່ຈຸດແຜນທີ່ນະຄອນຫຼວງວຽງຈັນ, ເຄື່ອງໝາຍທີ່ດິນສອງຈຸດ ຄື ເບື້ອງຂວາດ້ານເທິງ ແລະ ເບື້ອງຊ້າຍດ້ານເທິງຂອງແຜນທີ່ປະເທດລາວ, ມີຄຳວ່າກົມຄຸ້ມຄອງ ແລະ ພັດທະນາທີ່ດິນ ຢູ່ທັງ ສີ່ ແຈຂອງໃບທະບຽນທີ່ດິນລັດ ແລະ ໃບຕາດິນລັດ.

ໃບທະບຽນທີ່ດິນລັດ ແລະ ໃບຕາດິນລັດ ມີເນື້ອໃນອັນດຽວກັນ ຊຶ່ງປະກອບມີ ດັ່ງນີ້:

1. ພະແນກກະສິກຳ ແລະ ສິ່ງແວດລ້ອມ ນະຄອນຫຼວງວຽງຈັນ/ແຂວງ;
2. ຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ເມືອງ/ນະຄອນ;
3. ເລກທີ;
4. ອອກຄັ້ງທີ;
5. ບາໂຄດ;
6. ທີ່ຕັ້ງຕອນດິນ;
7. ນະຄອນຫຼວງວຽງຈັນ/ແຂວງ;
8. ເມືອງ/ນະຄອນ;
9. ຕາແສງ;
10. ບ້ານ;
11. ໜ່ວຍ;
12. ອອກໃຫ້ແກ່;
13. ການໄດ້ມາຂອງສິດນຳໃຊ້ທີ່ດິນຂອງລັດ;
14. ເປົ້າໝາຍການນຳໃຊ້;
15. ປະເພດທີ່ດິນ, ເຂດ;
16. ປຶ້ມທະບຽນທີ່ດິນເຫຼັ້ມທີ, ໃບທີ, ແຜນທີ່ຕາດິນເລກທີ;
17. ຕອນດິນເລກທີ, ເນື້ອທີ່ດິນ (ຕາແມັດ), ມາດຕາສ່ວນ;
18. ແຜນທີ່ຕອນດິນ;
19. ອອກໃຫ້ທີ່, ວັນທີ, ເດືອນ, ປີ, ລາຍເຊັນ ແລະ ຕາປະທັບ ຂອງຫົວໜ້າຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ເມືອງ, ນະຄອນ ຫຼື ລາຍເຊັນ ແລະ ປະທັບຕາ ຂອງຫົວໜ້າພະແນກກະສິກຳ ແລະ ສິ່ງແວດລ້ອມ ນະຄອນຫຼວງວຽງຈັນ, ແຂວງ ໃນກໍລະນີຍັງບໍ່ທັນມອບສິດໃຫ້ຂັ້ນເມືອງ.

ສຳລັບໃບທະບຽນທີ່ດິນລັດ ແລະ ໃບຕາດິນລັດ ທີ່ອອກໃຫ້ແກ່ຜູ້ເຊົ່າ ຫຼື ສຳປະທານທີ່ດິນຂອງລັດ ຫຼື ຜູ້ຊື້ສິດນຳໃຊ້ທີ່ດິນຈັດສັນຂອງລັດແບບມີກຳນົດ ແມ່ນ ມີເນື້ອໃນດຽວກັນຕາມເທິງນີ້ ແຕ່ຢູ່ເທິງເບື້ອງຂວາກຳນົດຊື່ກະຊວງກະສິກຳ ແລະ ສິ່ງແວດລ້ອມ, ສ່ວນຢູ່ເບື້ອງຊ້າຍດ້ານລຸ່ມ ແມ່ນມີບ່ອນ ເຊັນ ແລະ ປະທັບຕາຂອງຫົວໜ້າພະແນກກະສິກຳ ແລະ ສິ່ງແວດລ້ອມ ນະຄອນຫຼວງວຽງຈັນ/ແຂວງ.

**ມາດຕາ 4 ເນື້ອໃນແບບພິມໃບທະບຽນທີ່ດິນ ແລະ ໃບຕາດິນ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງສັງຄົມ**

ລັກສະນະພາຍນອກຂອງແບບພິມໃບທະບຽນທີ່ດິນ ແລະ ໃບຕາດິນ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງສັງຄົມ ປະກອບມີ ຂະໜາດເຈັ້ຍ A4 (210 x 297 ມີລີແມັດ), ດ້ານໜ້າເປັນສີຂາວງາຊ້າງລາຍຂຽວອ່ອນ, ເຄື່ອງໝາຍຊາດ, ແຜນທີ່ປະເທດລາວຢູ່ທາງກາງເປັນສີຂຽວອ່ອນ, ສັນຍາລັກເປັນລູກສອນຊີ້ບອກໄປທາງທິດເໜືອຂອງແຜນທີ່ປະເທດ, ຂອບເປັນສີເຫຼືອງທີ່ມີລາຍຂອບເປັນສີແດງ ແລະ ດ້ານຫຼັງເປັນຕາຕະລາງການຈົດທະບຽນການເຄື່ອນໄຫວສິດນຳໃຊ້ທີ່ດິນ.

ລັກສະນະພາຍໃນຂອງແບບພິມໃບທະບຽນທີ່ດິນ ແລະ ໃບຕາດິນ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງສັງຄົມ ປະກອບມີ ຮູບທາດຫຼວງວຽງຈັນ ຢູ່ຈຸດແຜນທີ່ນະຄອນຫຼວງວຽງຈັນ, ເຄື່ອງໝາຍທີ່ດິນ ສອງ ຈຸດຄື ເບື້ອງຂວາດ້ານເທິງ ແລະ ເບື້ອງຊ້າຍດ້ານເທິງຂອງແຜນທີ່ປະເທດລາວ, ມີຄຳວ່າກົມຄຸ້ມຄອງ ແລະ ພັດທະນາທີ່ດິນ ຢູ່ທັງ ສີ່ ແຈຂອງໃບທະບຽນທີ່ດິນ ແລະ ໃບຕາດິນ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ.

ດ້ານໜ້າໃບທະບຽນທີ່ດິນ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງສັງຄົມ ມີເນື້ອໃນອັນດຽວກັນ ຊຶ່ງປະກອບມີ ດັ່ງນີ້:

1. ພະແນກກະສິກຳ ແລະ ສິ່ງແວດລ້ອມ ນະຄອນຫຼວງວຽງຈັນ/ແຂວງ;
2. ຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ເມືອງ/ນະຄອນ;
3. ເລກທີ;
4. ອອກຄັ້ງທີ;
5. ບາໂຄດ;
6. ທີ່ຕັ້ງຕອນດິນ;
7. ນະຄອນຫຼວງວຽງຈັນ/ແຂວງ;
8. ເມືອງ/ນະຄອນ;
9. ຕາແສງ;
10. ບ້ານ;
11. ໜ່ວຍ;
12. ອອກໃຫ້ແກ່;
13. ວັນເດືອນປີເກີດ, ສັນຊາດ, ອາຊີບ;
14. ທີ່ຢູ່ປັດຈຸບັນ ບ້ານ, ໜ່ວຍ, ຕາແສງ, ເມືອງ/ນະຄອນ, ນະຄອນຫຼວງວຽງຈັນ/ແຂວງ;
15. ຊື່ ແລະ ນາມສະກຸນ ຜົວ ຫຼື ເມຍ, ວັນເດືອນປີເກີດ;
16. ສັນຊາດ, ອາຊີບ;
17. ການໄດ້ມາຂອງສິດນຳໃຊ້ທີ່ດິນ;

18. ຖານະເປັນເຈົ້າຂອງສິດນຳໃຊ້ທີ່ດິນ;

19. ປະເພດທີ່ດິນ, ເຂດ;

20. ປຶ້ມທະບຽນທີ່ດິນເຫຼັ້ມທີ, ໃບທີ, ແຜນທີ່ຕາດິນເລກທີ;

21. ຕອນດິນເລກທີ, ເນື້ອທີ່ດິນ (ຕາແມັດ), ມາດຕາສ່ວນ;

22. ແຜນທີ່ຕອນດິນ;

23. ອອກໃຫ້ທີ່, ວັນທີ, ເດືອນ, ປີ, ລາຍເຊັນ ແລະ ຕາປະທັບ ຂອງຫົວໜ້າຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ເມືອງ, ນະຄອນ ຫຼື ລາຍເຊັນ ແລະ ປະທັບຕາ ຂອງຫົວໜ້າພະແນກກະສິກຳ ແລະ ສິ່ງແວດລ້ອມ ນະຄອນຫຼວງວຽງຈັນ, ແຂວງ ໃນກໍລະນີຍັງບໍ່ທັນມອບສິດໃຫ້ຂັ້ນເມືອງ.

ສຳລັບໃບທະບຽນທີ່ດິນ ແລະ ໃບຕາດິນ ທີ່ອອກໃຫ້ແກ່ນິຕິບຸກຄົນ ເພື່ອປຸກສ້າງຄອນໂດມີນຽມ ແມ່ນມີເນື້ອໃນຄ້າຍຄືກັນຕາມເທິງນີ້ ແຕ່ຢູ່ເທິງເບື້ອງຂວາກຳນົດຊື່ກະຊວງກະສິກຳ ແລະ ສິ່ງແວດລ້ອມ, ສ່ວນຢູ່ເບື້ອງຊ້າຍດ້ານລຸ່ມ ແມ່ນມີບ່ອນ ເຊັນ ແລະ ປະທັບຕາຂອງຫົວໜ້າພະແນກກະສິກຳ ແລະ ສິ່ງແວດລ້ອມ ນະຄອນຫຼວງວຽງຈັນ/ແຂວງ.

ສຳລັບການຂຶ້ນທະບຽນທີ່ດິນປຸກສ້າງຄອນໂດມີນຽມໃບທະບຽນທີ່ດິນ ແລະ ໃບຕາດິນດັ່ງກ່າວ ທີ່ອອກໃຫ້ແກ່ນິຕິບຸກຄົນນັ້ນ ແມ່ນມີເນື້ອໃນຄ້າຍຄືກັນຕາມເທິງນີ້ ແຕ່ຢູ່ເທິງເບື້ອງຂວາກຳນົດຊື່ກະຊວງກະສິກຳ ແລະ ສິ່ງແວດລ້ອມ. ສ່ວນຢູ່ເບື້ອງຊ້າຍດ້ານລຸ່ມ ແມ່ນມີບ່ອນເຊັນ ແລະ ປະທັບຕາຂອງຫົວໜ້າພະແນກກະສິກຳ ແລະ ສິ່ງແວດລ້ອມ ນະຄອນຫຼວງວຽງຈັນ/ແຂວງ.

ດ້ານຫຼັງໃບທະບຽນທີ່ດິນ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງສັງຄົມ ມີຕາຕະລາງການຈົດທະບຽນການເຄື່ອນໄຫວສິດນຳໃຊ້ທີ່ດິນ ປະກອບມີເນື້ອໃນ ດັ່ງນີ້:

1. ການຈົດທະບຽນການເຄື່ອນໄຫວສິດນຳໃຊ້ທີ່ດິນ, ວັນທີ, ປຶ້ມຈົດທະບຽນ (ເຫຼັ້ມທີ, ເລກທີ);
2. ປະເພດເອກະສານ ຫຼື ສັນຍາ;
3. ຊື່ ແລະ ນາມສະກຸນ ເຈົ້າຂອງສິດນຳໃຊ້ທີ່ດິນ;
4. ຊື່ ແລະ ນາມສະກຸນ ຄູ່ສັນຍາ;
5. ຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ເມືອງ, ນະຄອນ (ໃນເວລາການຈົດທະບຽນ);
6. ການຈົດທະບຽນການລຶບລ້າງ, ວັນທີ, ປຶ້ມຈົດທະບຽນ (ເຫຼັ້ມທີ, ເລກທີ);
7. ຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ເມືອງ, ນະຄອນ (ໃນເວລາລຶບລ້າງການຈົດທະບຽນ).

**ມາດຕາ 5 ການຈັດພິມແບບພິມໃບທະບຽນທີ່ດິນ ແລະ ໃບຕາດິນ**

ກົມຄຸ້ມຄອງ ແລະ ພັດທະນາທີ່ດິນ ເປັນຜູ້ຮັບຜິດຊອບໂດຍກົງໃນການຈັດພິມແບບພິມໃບທະບຽນທີ່ດິນ ແລະ ໃບຕາດິນລັດ, ໃບທະບຽນທີ່ດິນ ແລະ ໃບຕາດິນ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງສັງຄົມ ແລ້ວ ຈັດສົ່ງໃຫ້ພະແນກກະສິກຳ ແລະ ສິ່ງແວດລ້ອມ ນະຄອນຫຼວງວຽງຈັນ, ແຂວງ, ເພື່ອນຳສົ່ງໃຫ້ຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ເມືອງ, ນະຄອນ ພິມເນື້ອໃນລະອຽດຕາມທີ່ກຳນົດໄວ້ໃນມາດຕາ 3 ແລະ 4 ຂອງຂໍ້ຕົກລົງສະບັບນີ້ ທີ່ໄດ້ກຳນົດໄວ້ໃນໂປຣແກຣມຖານຂໍ້ມູນທະບຽນທີ່ດິນ ໃສ່ແຕ່ລະແບບພິມ.

ພະແນກກະສິກຳ ແລະ ສິ່ງແວດລ້ອມ ນະຄອນຫຼວງວຽງຈັນ, ແຂວງ, ອອກແຈ້ງການໃຫ້ທຸກພາກສ່ວນພາຍໃນທ້ອງຖິ່ນຂອງຕົນໄດ້ຮັບຊາບ ກ່ຽວກັບການນຳໃຊ້ແບບພິມ ໃບທະບຽນທີ່ດິນ ແລະ ໃບຕາດິນ ຕາມຂໍ້ຕົກລົງສະບັບນີ້.

# ໝວດທີ 3
# ການພິມເນື້ອໃນລະອຽດ ໃສ່ແບບພິມໃບທະບຽນທີ່ດິນ ແລະ ໃບຕາດິນ

**ມາດຕາ 6 ການພິມເນື້ອໃນລະອຽດໃສ່ແບບພິມໃບທະບຽນທີ່ດິນ ແລະ ໃບຕາດິນລັດ**

ການພິມເນື້ອໃນລະອຽດໃສ່ແບບພິມໃບທະບຽນທີ່ດິນ ແລະ ໃບຕາດິນລັດ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 3 ຂອງຂໍ້ຕົກລົງສະບັບນີ້ ໃຫ້ນໍາໃຊ້ໂປຣແກຣມຖານຂໍ້ມູນທະບຽນທີ່ດິນ ລາວແລນເຣັກ (Lao Land Reg) ໂດຍປະຕິບັດ ດັ່ງນີ້:

ໂປຣແກຣມທີ່ນໍາໃຊ້ເຂົ້າໃນການພິມເນື້ອໃນລະອຽດໃສ່ແບບພິມໃບທະບຽນທີ່ດິນ ແລະ ໃບຕາດິນ.

ກ. ການອອກໃບຕາດິນລັດໃຫ້ແກ່ ອົງການຈັດຕັ້ງພັກ, ລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ, ລວມໝູ່ ແລະ ບຸກຄົນ ທີ່ໄດ້ຮັບນະໂຍບາຍສິດນໍາໃຊ້ທີ່ດິນຂອງລັດ:

1. ເລກທີ: ໃຫ້ພິມຕາມເລກລໍາດັບການອອກໃບທະບຽນທີ່ດິນ ແລະ ໃບຕາດິນ ແຕ່ລະຕອນພາຍໃນບ້ານ, ຕາແສງ;

2. ອອກຄັ້ງທີ: ໃຫ້ພິມຈໍານວນຄັ້ງ ຂອງການອອກໃບທະບຽນທີ່ດິນ ແລະ ໃບຕາດິນ ທີ່ມີການປ່ຽນແປງໃບຕາດິນແຕ່ລະຄັ້ງ ແລະ ໃຫ້ພິມເປັນເລກສາກົນ (ເລີ່ມຈາກລໍາດັບທີ 1, 2, 3 ແລະ ຕໍ່ໆໄປ);

3. ທີ່ຕັ້ງຕອນດິນ: ໃຫ້ພິມຕົວເລກລະຫັດ ນະຄອນຫຼວງວຽງຈັນ/ແຂວງ, ເມືອງ/ນະຄອນ, ຕາແສງ ແລະ ບ້ານ ບ່ອນທີ່ດິນຕັ້ງຢູ່ ໂດຍມີເກົ້າຕົວເລກ ເຊັ່ນ ສອງ ຕົວເລກທໍາອິດ ແມ່ນລະຫັດ ນະຄອນຫຼວງວຽງຈັນ/ແຂວງ, ສາມ ຕົວເລກທາງກາງ ແມ່ນ ລະຫັດ ເມືອງ/ນະຄອນ ແລະ ສີ່ ຕົວເລກສຸດທ້າຍ ແມ່ນລະຫັດ ຕາແສງ, ບ້ານ ບ່ອນທີ່ດິນຕັ້ງຢູ່.

4. ອອກໃຫ້ແກ່:

4.1. ສໍາລັບ ອົງການຈັດຕັ້ງພັກ, ລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ ແລະ ອົງການຈັດຕັ້ງມະຫາຊົນ ແມ່ນ ໃຫ້ພິມຊື່ຂອງອົງການຈັດຕັ້ງດັ່ງກ່າວ;

4.2. ສໍາລັບ ລວມໝູ່ ແມ່ນ ໃຫ້ພິມຊື່ຕາແສງ, ບ້ານ ຫຼື ຫຼາຍບ້ານ;

4.3. ສໍາລັບ ບຸກຄົນທີ່ໄດ້ຮັບນະໂຍບາຍສິດນໍາໃຊ້ທີ່ດິນຂອງລັດ ແມ່ນ ໃຫ້ພິມຊື່ຜູ້ກ່ຽວຕາມຂໍ້ຕົກລົງຂອງປະທານຄະນະກໍາມະການປົກຄອງນະຄອນຫຼວງວຽງຈັນ, ແຂວງ ຫຼື ລັດຖະມົນຕີ ກະຊວງກະສິກໍາ ແລະ ສິ່ງແວດລ້ອມ ຫຼື ກະຊວງ ຫຼື ອົງການອື່ນທີ່ກ່ຽວຂ້ອງ.

ສ່ວນທີ່ດິນຂອງລັດ ທີ່ຍັງບໍ່ໄດ້ມອບສິດນໍາໃຊ້ໃຫ້ພາກສ່ວນໃດນັ້ນ ແມ່ນ ບໍ່ໃຫ້ພິມຊື່ອົງການໃດໃສ່.

5. ການໄດ້ມາຂອງສິດນໍາໃຊ້ທີ່ດິນຂອງລັດ: ໃຫ້ພິມຕາມຊື່ຂອງຂໍ້ຕົກລົງ ໂດຍໃສ່ເລກທີ, ລົງວັນທີຂອງຂໍ້ຕົກລົງດັ່ງກ່າວ. ໃນກໍລະນີທີ່ຍັງບໍ່ທັນໄດ້ມອບໃຫ້ພາກສ່ວນໃດຄຸ້ມຄອງ ແລະ ນໍາໃຊ້ ແມ່ນໃຫ້ພິມຄໍາວ່າ ການຈັດສັນ ແລະ ສະຫງວນໄວ້ເປັນທີ່ດິນຂອງລັດ, ການຖອນສິດ ຫຼື ການເສຍສິດນໍາໃຊ້ທີ່ດິນ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງສັງຄົມ, ການມອບສິດນໍາໃຊ້ທີ່ດິນຄືນໃຫ້ລັດ ດ້ວຍຄວາມສະໝັກໃຈ, ການຕັດສິນຂອງສານ.

6. ເປົ້າໝາຍການນໍາໃຊ້:

6.1. ອົງການຈັດຕັ້ງພັກ, ລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ ແລະ ອົງການຈັດຕັ້ງມະຫາຊົນ: ໃຫ້ພິມຕາມເປົ້າໝາຍຂອງການມອບສິດນໍາໃຊ້ທີ່ດິນຂອງລັດ ເຊັ່ນ ປຸກສ້າງ ສໍານັກງານ, ອົງການ, ເຮືອນພັກພະນັກງານ, ໂຮງໝໍ ແລະ ອື່ນໆ. ຖ້າເປັນທີ່ດິນກະສິກໍາ ແມ່ນ ໃຫ້ພິມຕາມເປົ້າໝາຍການທໍາການຜະລິດ; ສ່ວນທີ່ດິນຂອງລັດ ທີ່ຍັງບໍ່ໄດ້ມອບສິດນໍາໃຊ້ໃຫ້ພາກສ່ວນໃດນັ້ນ ແມ່ນບໍ່ໃຫ້ພິມຊື່ອົງການໃດໃສ່ໃບທະບຽນທີ່ດິນ ແລະ ໃບຕາດິນ;

6.2. ລວມໝູ່: ໃຫ້ພິມຕາມເປົ້າໝາຍຂອງການມອບສິດນໍາໃຊ້ທີ່ດິນຂອງລັດ ເຊັ່ນ ທີ່ດິນປ່າຊ້າ, ປ່າສັກສິດ, ໜອງລວມບ້ານ, ວັດ, ໂຮງຮຽນ, ສຸກສາລາ, ຫ້ອງການບ້ານ, ຕະຫຼາດຂອງບ້ານ;

6.3. ມອບໃຫ້ບຸກຄົນ ທີ່ໄດ້ຮັບນະໂຍບາຍສິດນຳໃຊ້ທີ່ດິນຂອງລັດ ໃຫ້ພິມຕາມເປົ້າໝາຍຂອງການມອບສິດນຳໃຊ້ທີ່ດິນຂອງລັດ.

7. ປະເພດທີ່ດິນ ແລະ ເຂດ:

7.1. ປະເພດທີ່ດິນ: ໃຫ້ພິມຕາມປະເພດທີ່ດິນຕາມຂໍ້ຕົກລົງໄດ້ມອບການນຳໃຊ້ທີ່ດິນຕົວຈິງ ເຊັ່ນ ທີ່ດິນປຸກສ້າງ, ທີ່ດິນກະສິກຳ, ທີ່ດິນປ່າໄມ້, ທີ່ດິນບໍລິເວນນ້ຳ, ທີ່ດິນວັດທະນະທຳ, ທີ່ດິນຄົມມະນາຄົມ, ທີ່ດິນອຸດສາຫະກຳ, ທີ່ດິນປ້ອງກັນຊາດ-ປ້ອງກັນຄວາມສະຫງົບ;

7.2. ເຂດ: ໃຫ້ພິມຕາມເຂດທີ່ຕັ້ງຂອງຕອນດິນ ເຊັ່ນ ທົ່ງພຽງ, ພູພຽງ ແລະ ພູດອຍ ພ້ອມກັນນັ້ນໃຫ້ພິມຕື່ມ ເຊັ່ນ ຕົວເມືອງ, ຊານເມືອງ ແລະ ຊົນນະບົດ.

8. ປຶ້ມທະບຽນທີ່ດິນເຫຼັ້ມທີ, ໃບທີ, ແຜນທີ່ຕາດິນເລກທີ:

8.1. ປຶ້ມທະບຽນທີ່ດິນເຫຼັ້ມທີ: ໃຫ້ພິມຕາມເລກລຳດັບຂອງປຶ້ມທະບຽນທີ່ດິນ;

8.2. ໃບທີ: ໃຫ້ພິມຕາມເລກລຳດັບຂອງເລກທີໃບທະບຽນທີ່ດິນ ແລະ ໃບຕາດິນ;

8.3. ແຜນທີ່ຕາດິນເລກທີ: ໃຫ້ພິມຂໍ້ມູນຕາມແບບພິມ "ກ 2".

9. ຕອນດິນເລກທີ, ເນື້ອທີ່ດິນ, ມາດຕາສ່ວນ:

9.1. ຕອນດິນເລກທີ: ໃຫ້ພິມຂໍ້ມູນຕາມແບບພິມ "ກ 2";

9.2. ເນື້ອທີ່ດິນ: ໃຫ້ພິມຂໍ້ມູນຕາມແບບພິມ "ກ 2" ໂດຍໃຫ້ພິມຫົວໜ່ວຍເປັນຕາແມັດ;

9.3. ມາດຕາສ່ວນ: ໃຫ້ພິມຂໍ້ມູນຕາມແບບພິມ "ກ 2".

10. ອອກໃຫ້ທີ່: ໃຫ້ພິມຊື່ ເມືອງ/ນະຄອນ;

11. ວັນທີ ເດືອນ ປີ: ໃຫ້ໃສ່ວັນທີ ຫົວໜ້າຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ເມືອງ/ນະຄອນ ລົງລາຍເຊັນ ຫຼື ຫົວໜ້າພະແນກກະສິກຳ ແລະ ສິ່ງແວດລ້ອມ ນະຄອນຫຼວງວຽງຈັນ, ແຂວງ ລົງລາຍເຊັນ.

ໃນກໍລະນີ ຫົວໜ້າຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ເມືອງ/ນະຄອນ ຫຼື ຫົວໜ້າພະແນກກະສິກຳ ແລະ ສິ່ງແວດລ້ອມ ນະຄອນຫຼວງວຽງຈັນ, ແຂວງ ມີການມອບສິດໃຫ້ຜູ້ຮອງຮັບຜິດຊອບວຽກງານແທນຊົ່ວຄາວກ່ອນເຊັນໃບທະບຽນທີ່ດິນລັດ ແລະ ໃບຕາດິນລັດ ໃຫ້ຂຽນ ຄຳວ່າ "ເຊັນແທນ" ຢູ່ທາງໜ້າຕຳແໜ່ງຫົວໜ້າຫ້ອງການ ຫຼື ຫົວໜ້າພະແນກ ພ້ອມທັງຂຽນຄຳວ່າ " ຮອງຫົວໜ້າຫ້ອງການ ຫຼື ຮອງຫົວໜ້າພະແນກ" ໃສ່ກ້ອງຫົວໜ້າຫ້ອງການ ຫຼື ຫົວໜ້າພະແນກ.

ຂ. ການອອກໃບຕາດິນລັດໃຫ້ແກ່ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ພາຍໃນ ແລະ ຕ່າງປະເທດ ທີ່ເຊົ່າ ຫຼື ສຳປະທານ ທີ່ດິນຂອງລັດ ຫຼື ຊື້ສິດນຳໃຊ້ທີ່ດິນຈັດສັນຂອງລັດແບບມີກຳນົດ:

1. ການພິມເລກທີ: ໃຫ້ພິມຄືກັນກັບຂໍ້ 1 ຂອງຂໍ້ ກ ເທິງນີ້;

2. ອອກຄັ້ງທີ: ໃຫ້ພິມຄືກັນກັບຂໍ້ 2 ຂອງຂໍ້ ກ ເທິງນີ້;

3. ທີ່ຕັ້ງຕອນດິນ: ໃຫ້ພິມຄືກັນກັບຂໍ້ 3 ຂອງຂໍ້ ກ ເທິງນີ້;

4. ອອກໃຫ້ແກ່: ໃຫ້ພິມຊື່ຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງພາຍໃນ ແລະ ຕ່າງປະເທດ ຕາມການຕົກລົງຂອງລັດຖະບານ ຫຼື ປະທານຄະນະກຳມະການປົກຄອງນະຄອນຫຼວງວຽງຈັນ, ແຂວງ ຫຼື ຕາມສັນຍາຊື້ ຂາຍສິດນຳໃຊ້ທີ່ດິນຈັດສັນຂອງລັດແບບມີກຳນົດ;

5. ການໄດ້ມາຂອງສິດນຳໃຊ້ທີ່ດິນຂອງລັດ: ໃຫ້ພິມຕາມສັນຍາ ເຊົ່າ ຫຼື ສຳປະທານທີ່ດິນ ຫຼື ສັນຍາຊື້ຂາຍສິດນຳໃຊ້ທີ່ດິນຈັດສັນຂອງລັດແບບມີກຳນົດ;

6. ເປົ້າໝາຍການນຳໃຊ້: ໃຫ້ພິມຕາມເປົ້າໝາຍຂອງສັນຍາເຊົ່າ ຫຼື ສຳປະທານທີ່ດິນຂອງລັດ ຫຼື ຊື້ຂາຍສິດນຳໃຊ້ທີ່ດິນຈັດສັນຂອງລັດແບບມີກຳນົດ ໃນນັ້ນ:

6.1. ເປົ້າໝາຍການເຊົ່າ ເປັນຕົ້ນ ການຄ້າ, ການບໍລິການ, ປ່ອນຢູ່ອາໄສ, ການທ່ອງທ່ຽວ, ການກິລາ, ການທູດ ແລະ ການຈັດຕັ້ງສາກົນ;

6.2. ເປົ້າໝາຍການສຳປະທານ ເປັນຕົ້ນ ໃນຂະແໜງກະສິກຳ, ປູກໄມ້, ແຫຼ່ງທ່ອງທ່ຽວ, ເຂດອຸດສາຫະກຳ ຫຼື ນິຄົມອຸດສາຫະກຳ, ເຂດເສດຖະກິດພິເສດ, ເຂດເສດຖະກິດສະເພາະ, ການພັດທະນາເປັນຕົວເມືອງໃໝ່, ທາງດ່ວນ, ທ່າບົກ, ເຂດໂລຊິດສະຕິກ, ການພັດທະນາແຫຼ່ງພະລັງງານໄຟຟ້າ, ການຂຸດຄົ້ນບໍ່ແຮ່ ແລະ ພິມກຳນົດເວລາຂອງການເຊົ່າ ຫຼື ສຳປະທານທີ່ດິນຂອງລັດ ຕາມສັນຍາ ໂດຍພິມເປັນຕົວໜັງສື;

6.3. ເປົ້າໝາຍການຊື້ ຂາຍສິດນຳໃຊ້ທີ່ດິນຈັດສັນຂອງລັດແບບມີກຳນົດ ເປັນຕົ້ນ ພັດທະນາເປັນຕົວເມືອງໃໝ່, ສ້າງເປັນຄອນໂດມິນຽມ, ອາພາດເມັນ, ເຮືອນຈັດສັນ.

7. ປະເພດທີ່ດິນ ແລະ ເຂດ:

7.1. ປະເພດທີ່ດິນສຳລັບການເຊົ່າ ຫຼື ສຳປະທານ: ໃຫ້ພິມຕາມປະເພດທີ່ດິນຕາມສັນຍາເຊົ່າ ຫຼື ສຳປະທານທີ່ດິນຂອງລັດ ເຊັ່ນ ທີ່ດິນປຸກສ້າງ, ທີ່ດິນກະສິກຳ, ທີ່ດິນປ່າໄມ້, ທີ່ດິນບໍລິເວນນ້ຳ, ທີ່ດິນອັດທະນະທຳ, ທີ່ດິນຄົມມະນາຄົມ, ທີ່ດິນອຸດສາຫະກຳ. ສຳລັບການຊື້ ຂາຍສິດນຳໃຊ້ທີ່ດິນຈັດສັນຂອງລັດແບບມີກຳນົດ: ໃຫ້ພິມເປັນປະເພດທີ່ດິນປຸກສ້າງເທົ່ານັ້ນ;

7.2. ເຂດ: ໃຫ້ພິມຕາມເຂດທີ່ຕັ້ງຂອງຕອນດິນ ເຊັ່ນ ທົ່ງພຽງ, ພູພຽງ ແລະ ພູດອຍ ພ້ອມກັນນັ້ນໃຫ້ພິມຕື່ມ ເຊັ່ນ ຕົວເມືອງ, ຊານເມືອງ ແລະ ຊົນນະບົດ.

8. ປຶ້ມທະບຽນທີ່ດິນເຫຼັ້ມທີ: ໃຫ້ພິມຄືກັນກັບຂໍ້ 8 ຂອງຂໍ້ ກ ເທິງນີ້;

9. ຕອນດິນເລກທີ ແລະ ເນື້ອທີ່ດິນ: ໃຫ້ພິມຄືກັນກັບຂໍ້ 9 ຂອງຂໍ້ ກ ເທິງນີ້;

10. ມາດຕາສ່ວນ: ໃຫ້ພິມຄືກັນກັບຂໍ້ 10 ຂອງຂໍ້ ກ ເທິງນີ້;

11. ອອກໃຫ້ທີ່: ໃຫ້ພິມຊື່ນະຄອນຫຼວງວຽງຈັນ/ແຂວງ;

12. ວັນທີ ເດືອນ ປີ: ໃຫ້ໃສ່ວັນທີ ຫົວໜ້າພະແນກກະສິກຳ ແລະ ສິ່ງແວດລ້ອມ ນະຄອນຫຼວງວຽງຈັນ/ແຂວງ ລົງລາຍເຊັນ.

ໃນກໍລະນີຫົວໜ້າພະແນກກະສິກຳ ແລະ ສິ່ງແວດລ້ອມ ນະຄອນຫຼວງວຽງຈັນ/ແຂວງ ມີການມອບສິດໃຫ້ຜູ້ຮອງຮັບຜິດຊອບວຽກງານແທນຊົ່ວຄາວ ກ່ອນເຊັນໃບທະບຽນທີ່ດິນລັດ ແລະ ໃບຕາດິນລັດ ໃຫ້ຂຽນຄຳວ່າ "ເຊັນແທນ" ຢູ່ທາງໜ້າຕຳແໜ່ງຫົວໜ້າພະແນກດັ່ງກ່າວ ພ້ອມທັງຂຽນຄຳວ່າ "ຮອງຫົວໜ້າພະແນກ" ໃສ່ກ້ອງຫົວໜ້າພະແນກ.

ຄ. ທາງດ້ານຫຼັງຂອງໃບທະບຽນທີ່ດິນລັດ ແລະ ໃບຕາດິນລັດ.

ທາງດ້ານຫຼັງຂອງໃບທະບຽນທີ່ດິນລັດ ແລະ ໃບຕາດິນລັດ ທີ່ອອກໃຫ້ແກ່ອົງການຈັດຕັ້ງພັກ, ລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ, ລວມໝູ່ ແລະ ບຸກຄົນ ທີ່ໄດ້ຮັບນະໂຍບາຍສິດນຳໃຊ້ທີ່ດິນຂອງລັດ ລວມທັງການອອກໃບຕາດິນລັດໃຫ້ແກ່ຜູ້ເຊົ່າ ຫຼື ສຳປະທານທີ່ດິນ ແມ່ນບໍ່ໃຫ້ພິມຫຍັງໃສ່ (ປະຫວ່າງໄວ້ຕາມຮູບແບບເດີມ).

ສຳລັບດ້ານຫຼັງຂອງໃບທະບຽນທີ່ດິນລັດ ແລະ ໃບຕາດິນລັດ ທີ່ອອກໃຫ້ແກ່ຜູ້ຊື້ສິດນຳໃຊ້ທີ່ດິນຈັດສັນຂອງລັດແບບມີກຳນົດ ແມ່ນ ມີຕາຕະລາງບັນທຶກການຈົດທະບຽນການເຄື່ອນໄຫວສິດນຳໃຊ້ທີ່ດິນ ເຊັ່ນ ໃຫ້ເຊົ່າ, ເປັນຫຼັກຊັບຄ້ຳປະກັນ, ຂາຍຝາກ, ທາດສະພາບຕາມສັນຍາ, ສິດເໜືອທີ່ດິນ ແລະ ການເຄື່ອນໄຫວອື່ນຕາມກຳນົດເວລາ ໂດຍໃຫ້ຫົວໜ້າພະແນກກະສິກຳ ແລະ ສິ່ງແວດລ້ອມ ເປັນຜູ້ເຊັນຢັ້ງຢືນການເຄື່ອນໄຫວສິດນຳໃຊ້ທີ່ດິນດັ່ງກ່າວ.

**ມາດຕາ 7 ການພິມເນື້ອໃນລະອຽດຕາມແບບພິມໃບທະບຽນທີ່ດິນ ແລະ ໃບຕາດິນ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງສັງຄົມ**

ການພິມເນື້ອໃນລະອຽດຕາມແບບພິມໃບທະບຽນທີ່ດິນ ແລະ ໃບຕາດິນ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງສັງຄົມ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 4 ຂອງຂໍ້ຕົກລົງສະບັບນີ້ ໃຫ້ນຳໃຊ້ໂປຣແກຣມຖານຂໍ້ມູນທະບຽນທີ່ດິນລາວແລນເຣັກ (Lao Land Reg) ໂດຍໃຫ້ປະຕິບັດ ດັ່ງນີ້:

ກ. ສຳລັບໃບທະບຽນທີ່ດິນ ແລະ ໃບຕາດິນ ບຸກຄົນ

1. ເລກທີ: ໃຫ້ພິມຕາມເລກລຳດັບການອອກໃບທະບຽນທີ່ດິນ ແລະ ໃບຕາດິນ ແຕ່ລະຕອນພາຍໃນຕາແສງ ແລະ ບ້ານ;

2. ອອກຄັ້ງທີ: ໃຫ້ພິມຈຳນວນຄັ້ງ ຂອງການອອກໃບຕາດິນທີ່ມີການປ່ຽນແປງໃບຕາດິນແຕ່ລະຄັ້ງ ແລະ ໃຫ້ພິມເປັນເລກສາກົນ (ເລີ່ມຈາກລຳດັບທີ 1, 2, 3 ແລະ ຕໍ່ໆໄປ);

3. ທີ່ຕັ້ງຕອນດິນ: ໃຫ້ພິມຕົວເລກລະຫັດ ນະຄອນຫຼວງວຽງຈັນ/ແຂວງ, ເມືອງ/ນະຄອນ, ຕາແສງ ແລະ ບ້ານ ບ່ອນທີ່ດິນຕັ້ງຢູ່ ໂດຍເລີ່ມຈາກລະຫັດ ຂອງນະຄອນຫຼວງວຽງຈັນ/ແຂວງ, ເມືອງ/ນະຄອນ, ຕາແສງ ແລະ ບ້ານ ບ່ອນທີ່ດິນຕັ້ງຢູ່;

4. ອອກໃຫ້ແກ່: ໃຫ້ພິມຊື່ເຈົ້າຂອງສິດນຳໃຊ້ທີ່ດິນ ຕາມແຕ່ລະກໍລະນີ ດັ່ງນີ້:

4.1. ຖ້າເປັນຊັບເດີມ: ໃຫ້ພິມຊື່ ແລະ ນາມສະກຸນຂອງຜົວ ຫຼື ເມຍ ຫຼື ບຸກຄົນທີ່ເປັນເຈົ້າຂອງສິດນຳໃຊ້ທີ່ດິນ;

4.2. ຖ້າເປັນສິນສົມສ້າງ: ໃຫ້ພິມທັງຊື່ຜົວ ແລະ ຊື່ເມຍໃສ່. ສຳລັບຜົວ ຫຼື ເມຍ ທີ່ເປັນຄົນຕ່າງດ້າວ, ຄົນບໍ່ມີສັນຊາດ ຫຼື ຄົນຕ່າງປະເທດ, ຄົນຕ່າງປະເທດທີ່ເປັນເຊື້ອຊາດລາວ ເຖິງແມ່ນວ່າເປັນສິນສົມສ້າງກໍຕາມ ແມ່ນ ບໍ່ ໃຫ້ພິມຊື່ຮ່ວມໃນໃບຕາດິນ;

4.3. ຖ້າເປັນສິດນຳໃຊ້ທີ່ດິນຮ່ວມກັນ: ໃຫ້ພິມຊື່ເຈົ້າຂອງສິດນຳໃຊ້ທີ່ດິນແຕ່ລະຄົນ (ຜູ້ທີ່ມີສິດນຳໃຊ້ທີ່ດິນຮ່ວມກັນມີແຕ່ພົນລະເມືອງລາວເທົ່ານັ້ນ);

4.4. ຖ້າເປັນສິດນຳໃຊ້ທີ່ດິນ ນິຕິບຸກຄົນ ຫຼື ການຈັດຕັ້ງທາງສັງຄົມ: ໃຫ້ພິມຊື່ຂອງວິສາຫະກິດ ຫຼື ບໍລິສັດ ຫຼື ອົງການຈັດຕັ້ງສັງຄົມ ເປັນຕົ້ນ ມູນນິທິ, ສະມາຄົມ, ສະຫະກອນ.

ສຳລັບ ຊື່ ແລະ ນາມສະກຸນ ຂອງເຈົ້າຂອງສິດນຳໃຊ້ທີ່ດິນ ແມ່ນ ໃຫ້ເອົາຕາມບັດປະຈຳຕົວ ຫຼື ປຶ້ມສຳມະໂນຄົວ.

5. ວັນ ເດືອນ ປີເກີດ, ສັນຊາດ ແລະ ອາຊີບ: ໃຫ້ພິມຕາມບັດປະຈຳຕົວ ຫຼື ປຶ້ມສຳມະໂນຄົວ ຂອງຜູ້ເປັນເຈົ້າຂອງສິດນຳໃຊ້ທີ່ດິນ. ໃນກໍລະນີເປັນສິດນຳໃຊ້ທີ່ດິນຮ່ວມກັນ ແມ່ນ ໃຫ້ພິມຂໍ້ມູນ ວັນ ເດືອນ ປີເກີດ, ສັນຊາດ ແລະ ອາຊີບ ຂອງຜູ້ທີ່ມີຊື່ທຳອິດຢູ່ໃນໃບຕາດິນ. ຖ້ານິຕິບຸກຄົນ ຫຼື ການຈັດຕັ້ງທາງສັງຄົມ ບໍ່ໃຫ້ພິມວັນ ເດືອນ, ປີ, ເກີດ, ສັນຊາດ ແລະ ອາຊີບ ໂດຍບໍ່ໃຫ້ລຶບເນື້ອໃນຕາມແບບພິມໃບທະບຽນທີ່ດິນ ແລະ ໃບຕາດິນ;

6. ທີ່ຢູ່ປັດຈຸບັນ ບ້ານ, ໜ່ວຍ, ຕາແສງ, ເມືອງ/ນະຄອນ, ນະຄອນຫຼວງວຽງຈັນ/ແຂວງ: ໃຫ້ພິມຕາມບັດປະຈຳຕົວ ຫຼື ປຶ້ມສຳມະໂນຄົວ ຂອງເຈົ້າຂອງສິດນຳໃຊ້ທີ່ດິນ. ໃນກໍລະນີຢູ່ນະຄອນຫຼວງວຽງຈັນ ແມ່ນ ບໍ່ໃຫ້ພິມ ຄຳວ່າ ແຂວງ ໂດຍໃຫ້ພິມ ຄຳວ່າ ນະຄອນຫຼວງວຽງຈັນ. ຖ້າກໍລະນີເຈົ້າຂອງສິດນຳໃຊ້ທີ່ດິນຮ່ວມ ແມ່ນ ໃຫ້ພິມຂໍ້ມູນຂອງຜູ້ທີ່ມີຊື່ທຳອິດຢູ່ໃນໃບຕາດິນ;

7. ຊື່ ແລະ ນາມສະກຸນ, ວັນ ເດືອນ ປີເກີດ ຂອງຜົວ ຫຼື ເມຍ: ໃຫ້ພິມຊື່ ແລະ ນາມສະກຸນ, ວັນ ເດືອນ ປີເກີດ ຂອງຜົວ ຫຼື ເມຍ ຕາມບັດປະຈຳຕົວ ຫຼື ສຳມະໂນຄົວ ຫຼື ໜັງສືຜ່ານແດນ. ໃນກໍລະນີເປັນເຈົ້າຂອງສິດນຳໃຊທີ່ດິນ ຮ່ວມກັນຫຼາຍຄົນ ບໍ່ໃຫ້ໃສ່ຊື່ຜົວ ຫຼື ເມຍ ທີ່ເປັນເຈົ້າຂອງສິດນຳໃຊ້ທີ່ດິນຮ່ວມກັນນັ້ນ;

8. ສັນຊາດ ແລະ ອາຊີບ: ໃຫ້ພິມຕາມບັດປະຈຳຕົວ ຫຼື ສຳມະໂນຄົວ ຫຼື ໜັງສືຜ່ານແດນ ຂອງຜົວ ຫຼື ເມຍ ເຖິງຈະເປັນຄົນຕ່າງດ້າວ, ຄົນບໍ່ມີສັນຊາດ, ຄົນຕ່າງປະເທດ ແລະ ຄົນຕ່າງປະເທດທີ່ເປັນເຊື້ອຊາດລາວກໍຕາມ;

9. ການໄດ້ມາຂອງສິດນຳໃຊ້ທີ່ດິນ: ໃຫ້ພິມຕາມການໄດ້ຮັບສິດນຳໃຊ້ທີ່ດິນ ເຊັ່ນ ການມອບຂອງລັດ (ມອບຂາດຕົວ), ການໂອນ (ຊື້ ຂາຍ, ແລກປ່ຽນ, ມອບ ຫຼື ຍົກ ສິດນຳໃຊ້ທີ່ດິນ, ເຂົ້າເປັນຮຸ້ນ), ການສືບທອດມູນມໍຣະດົກ (ຕາມກົດໝາຍ ຫຼື ພິໄນກຳ), ການໄດ້ສິດນຳໃຊ້ທີ່ດິນຕາມປະເພນີ, ໄດ້ຈາກການຈັດສັນທີ່ດິນຂອງລັດ, ໄດ້ອາໄສຢູ່ກ່ອນການກຳນົດເປັນເຂດທີ່ດິນປ່າໄມ້ ຫຼື ທຳການຜະລິດກ່ອນການກຳນົດເປັນເຂດທີ່ດິນປ່າໄມ້;

10. ຖານະການເປັນເຈົ້າຂອງສິດນຳໃຊ້ທີ່ດິນ: ໃຫ້ພິມ ຄຳວ່າ ຊັບເດີມ ຫຼື ສິນສົມສ້າງ ຫຼື ສິດນຳໃຊ້ທີ່ດິນຮ່ວມກັນ;

11. ປະເພດທີ່ດິນ, ເຂດ:

11.1. ປະເພດທີ່ດິນ: ໃຫ້ພິມ ຄຳວ່າ ທີ່ດິນປຸກສ້າງ (ທີ່ຢູ່ອາໄສ, ໂຮງງານອຸດສາຫະກຳ, ການຄ້າ ແລະ ບໍລິການ), ທີ່ດິນປຸກສ້າງເປົ່າວ່າງ. ຖ້າຫາກທີ່ດິນກະສິກຳ ໃຫ້ພິມຄຳວ່າ ທີ່ດິນກະສິກຳ (ທີ່ດິນນາ, ທີ່ດິນສວນ, ທີ່ດິນປູກຝັງ, ທີ່ດິນລ້ຽງສັດ, ທີ່ດິນປະມົງ, ທີ່ດິນຊົນລະປະທານ, ທີ່ດິນການຄົ້ນຄ້ວາທົດລອງດ້ານກະສິກຳ, ທີ່ດິນກະສິກຳເປົ່າວ່າງ ແລະ ບໍ່ພັດທະນາ);

11.2. ເຂດ: ໃຫ້ພິມຕາມເຂດທີ່ຕັ້ງຂອງຕອນດິນ ເຊັ່ນ ທົ່ງພຽງ, ພູພຽງ ແລະ ພູດອຍ ພ້ອມກັນນັ້ນ ໃຫ້ພິມຕື່ມ ເຊັ່ນ ຕົວເມືອງ, ຊານເມືອງ ແລະ ຊົນນະບົດ.

12. ປຶ້ມທະບຽນທີ່ດິນເຫຼັ້ມທີ, ໃບທີ, ແຜນທີ່ຕາດິນເລກທີ:

12.1. ປຶ້ມທະບຽນທີ່ດິນເຫຼັ້ມທີ: ໃຫ້ພິມຕາມເລກລຳດັບຂອງປຶ້ມທະບຽນທີ່ດິນ;

12.2. ໃບທີ: ໃຫ້ພິມຕາມລຳດັບຂອງເລກທີໃບທະບຽນທີ່ດິນ ແລະ ໃບຕາດິນ;

12.3. ແຜນທີ່ຕາດິນເລກທີ: ໃຫ້ພິມລະອຽດຕາມແບບພິມ "ກ 2".

13. ຕອນດິນເລກທີ, ເນື້ອທີ່ດິນ, ມາດຕາສ່ວນ:

13.1. ຕອນດິນເລກທີ: ໃຫ້ພິມຂໍ້ມູນຕາມແບບພິມ "ກ 2";

13.2. ເນື້ອທີ່ດິນ: ໃຫ້ພິມຂໍ້ມູນຕາມແບບພິມ "ກ 2" ໂດຍໃຫ້ພິມຫົວໜ່ວຍເປັນຕາແມັດ;

13.3. ມາດຕາສ່ວນ: ໃຫ້ພິມຂໍ້ມູນຕາມແບບພິມ "ກ 2".

14. ອອກໃຫ້ທີ່: ໃຫ້ພິມຊື່ເມືອງ/ນະຄອນ;

15. ວັນທີ ເດືອນ ປີ: ໃຫ້ໃສ່ວັນທີ ຫົວໜ້າຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ເມືອງ/ນະຄອນ ລົງລາຍເຊັນ ຫຼື ຫົວໜ້າພະແນກກະສິກຳ ແລະ ສິ່ງແວດລ້ອມ ນະຄອນຫຼວງວຽງຈັນ, ແຂວງ ລົງລາຍເຊັນ.

ໃນກໍລະນີ ຫົວໜ້າຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ເມືອງ/ນະຄອນ ຫຼື ຫົວໜ້າພະແນກກະສິກຳ ແລະ ສິ່ງແວດລ້ອມ ນະຄອນຫຼວງວຽງຈັນ, ແຂວງ ມີການມອບສິດໃຫ້ຜູ້ຮອງຮັບຜິດຊອບວຽກງານແທນຊົ່ວຄາວກ່ອນເຊັນໃບທະບຽນທີ່ດິນ ແລະ ໃບຕາດິນ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງສັງຄົມ ໃຫ້ຂຽນຄຳວ່າ "ເຊັນແທນ" ຢູ່ທາງໜ້າຕຳແໜ່ງຫົວໜ້າຫ້ອງການ ຫຼື ຫົວໜ້າພະແນກ ພ້ອມທັງຂຽນຄຳວ່າ "ຮອງຫົວໜ້າຫ້ອງການ ຫຼື ຮອງຫົວໜ້າພະແນກ" ໃສ່ກ້ອງຫົວໜ້າຫ້ອງການ ຫຼື ຫົວໜ້າພະແນກດັ່ງກ່າວ.

ຂ. ທາງດ້ານຫຼັງໃບທະບຽນທີ່ດິນ ແລະ ໃບຕາດິນ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ: ມີຕາຕະລາງບັນທຶກການຈົດທະບຽນການເຄື່ອນໄຫວສິດນຳໃຊ້ທີ່ດິນ ເຊັ່ນ ໃຫ້ເຊົ່າ, ເປັນຫຼັກຊັບຄ້ຳປະກັນ, ຂາຍຝາກ, ທາດສະພາບຕາມສັນຍາ, ສິດເໜືອທີ່ດິນ ແລະ ການເຄື່ອນໄຫວອື່ນ ໂດຍໃຫ້ຫົວໜ້າຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ຫຼື ຫົວໜ້າພະແນກກະສິກຳ ແລະ ສິ່ງແວດລ້ອມ ນະຄອນຫຼວງວຽງຈັນ, ແຂວງ ເປັນຜູ້ເຊັນຢັ້ງຢືນການເຄື່ອນໄຫວສິດນຳໃຊ້ທີ່ດິນດັ່ງກ່າວ.

## ໝວດທີ 4
## ການໃສ່ບາໂຄດ ແລະ ປະທັບຕາໃສ່ໃບທະບຽນທີ່ດິນ ແລະ ໃບຕາດິນ

### ມາດຕາ 8 ການໃສ່ບາໂຄດ

ໃບທະບຽນທີ່ດິນ ແລະ ໃບຕາດິນ ຕ້ອງໃສ່ບາໂຄດ ໂດຍໃຫ້ໃສ່ເບື້ອງເທິງຂໍ້ມູນຕົວເລກກ່ຽວກັບທີ່ຕັ້ງຕອນດິນ ຂອງໃບທະບຽນທີ່ດິນ ແລະ ໃບຕາດິນ.

### ມາດຕາ 9 ການປະທັບຕາ

ການປະທັບຕາ ຕ້ອງປະທັບຕາເຕັງໃສ່ລາຍເຊັນ ຂອງຫົວໜ້າຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ເມືອງ/ນະຄອນ ຫຼື ຫົວໜ້າພະແນກກະສິກຳ ແລະ ສິ່ງແວດລ້ອມ ນະຄອນຫຼວງວຽງຈັນ/ແຂວງ. ການປະທັບຕາ ໃຫ້ປະທັບໃສ່ໃບທະບຽນທີ່ດິນ ແລະ ໃບຕາດິນ ຢ່າງຊັດເຈນ ແລະ ຊື່ຕົງ, ກວມເອົາໜຶ່ງສ່ວນສາມຂອງລາຍເຊັນມາ ທາງເບື້ອງຊ້າຍ ໂດຍບໍ່ໃຫ້ທັບ ຫຼື ກວມເອົາຕຳແໜ່ງຂອງຜູ້ລົງລາຍເຊັນ ບໍ່ໃຫ້ປະທັບຕາກ່ອນລົງລາຍເຊັນ ຯລ.

ແລະ ບໍ່ໃຫ້ປະທັບຕາໃສ່ໃນໃບທະບຽນທີ່ດິນ ແລະ ໃບຕາດິນ ທີ່ບໍ່ມີລາຍເຊັນ. ຊື່ ແລະ ນາມສະກຸນ ຂອງຜູ້ເຊັນໃບທະບຽນທີ່ດິນ ແລະ ໃບຕາດິນ ໃຫ້ຈໍ້າຂະໜານ ແລະ ຕັ້ງສາກັບຕໍາແໜ່ງຜູ້ເຊັນ. ຊື່ ແລະ ນາມສະກຸນ ໃຫ້ຈໍ້າກາຊື່ຂອງຜູ້ລົງລາຍເຊັນ.

## ໝວດທີ 5
## ບົດບັນຍັດສຸດທ້າຍ

### ມາດຕາ 10 ການຈັດຕັ້ງປະຕິບັດ

ມອບໃຫ້ ກົມຄຸ້ມຄອງ ແລະ ພັດທະນາທີ່ດິນ, ພະແນກກະສິກໍາ ແລະ ສິ່ງແວດລ້ອມ ນະຄອນຫຼວງວຽງຈັນ, ແຂວງ, ຫ້ອງການກະສິກໍາ ແລະ ສິ່ງແວດລ້ອມ ເມືອງ, ນະຄອນ ເປັນເຈົ້າການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຂັ້ນສູນກາງ ແລະ ທ້ອງຖິ່ນ ໂຄສະນາເຜີຍແຜ່, ແນະນໍາ ແລະ ຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ໃຫ້ມີປະສິດທິພາບ.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

### ມາດຕາ 11 ຜົນສັກສິດ

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນທີ 18 ສິງຫາ 2026 ເປັນຕົ້ນໄປ.

ຂໍ້ຕົກລົງສະບັບນີ້ ປ່ຽນແທນ ຂໍ້ຕົກລົງ ວ່າດ້ວຍການກໍານົດເນື້ອໃນແບບພິມ ແລະ ການພິມຕາມແບບພິມ ໃບທະບຽນທີ່ດິນ ແລະ ໃບຕາດິນ ສະບັບເລກທີ 0672/ກຊສ, ລົງວັນທີ 19 ກຸມພາ 2021.

**ລັດຖະມົນຕີ**

**ປອ. ໄຊມົນຄອນ ອິນທະວົງ**